ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
ຖະໜົນ: ກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ: 856 21 264834-5 ແຟັກ: 856021 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

ເລກທີ:.....0010...../ປທລ/2021
ນະຄອນຫຼວງວຽງຈັນ, ວັນທີ: 16 ມີນາ 2021

ຮຽນ: ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ
ບັນດາ ທ່ານ ຜູ້ຖືຮຸ້ນ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ເລື່ອງ: ການແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານຄັ້ງທີ 1/2021

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄ້ອງຫຼັກຊັບ ວ່າດ້ວຍລະບຽບການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 004/ຄຄຊ, ລົງວັນທີ 28 ມັງກອນ 2019;
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ("ບໍລິສັດ" ຫຼື "ປທລ") ຂໍຖືເປັນກຽດແຈ້ງໃຫ້ທ່ານຊາບ ກ່ຽວກັບມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານຄັ້ງທີ 1/2020 ໃນວັນທີ 16 ມີນາ 2021 ດັ່ງລາຍລະອຽດລຸ່ມນີ້:

1. ຮັບຮອງເອົາບົດບັນທຶກກອງປະຊຸມສະພາບໍລິຫານ ປທລ ປະຈຳໄຕມາດ 3/2020 ເມື່ອວັນທີ 28/08/2020;
2. ຮັບຮອງເອົາ ບົດລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2020 ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບຂອງຜູ້ກວດສອບພາຍນອກ ປະຈຳປີ 2020 ເພື່ອນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງ;
3. ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2021 ເພື່ອນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງ;
4. ຮັບຮອງບໍ່ໃຫ້ມີການປັນຜົນ ຈາກຜົນການດຳເນີນທຸລະກິດປະຈຳປີ 2020 ອັນເນື່ອງມາຈາກບໍລິສັດ ຂາດທຶນໃນການດຳເນີນທຸລະກິດ ເພື່ອນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງ;
5. ກຳນົດເອົາວັນທີ 30 ມີນາ 2021 ເປັນມື້ປິດປຶ້ມບັນຊີຜູ້ຖືຄອງຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນ ໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020;
6. ຮັບຮອງແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຄື ບໍລິສັດ Price Waterhouse Coopers (Lao) Sole Co., Ltd. ("PwC") ພ້ອມທັງກຳນົດຄ່າຈ້າງ ປະຈຳປີ 2021 ຢູ່ລະຫວ່າງ 34,000 – 37,000 ໂດລາສະຫະລັດ, ໃຫ້ນຳສະເໜີໃນກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງ;

7. ຮັບຮອງການລາອອກຈາກຕຳແໜ່ງ ປະທານສະພາບໍລິຫານ ປທລ ຂອງ ທ່ານ ຈັນທອນ ສິດທິໄຊ ເພື່ອນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງ;

8. ຮັບຮອງເອົາ ທ່ານ ຫວ່າງ ຣັຕະນະວົງ ມາເປັນ ປະທານສະພາບໍລິຫານ ເພື່ອນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງ;

9. ກຳນົດວັນທີເປີດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020 ໃນວັນທີ 29 ເມສາ 2021 ເວລາ 8:30 ໂມງ ທີ່ ຫ້ອງປະຊຸມໃຫຍ່ ຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ;

10. ກຳນົດວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020 ມີລາຍລະອຽດດັ່ງນີ້:

    ວາລະທີ 1: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019;
    ວາລະທີ 2: ພິຈາລະນາ ແລະ ຮັບຮອງ ບົດລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2020 ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບຂອງຜູ້ກວດສອບພາຍນອກ ປະຈຳປີ 2020;
    ວາລະທີ 3: ພິຈາລະນາ ແລະ ຮັບຮອງເອົາ ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2021;
    ວາລະທີ 4: ພິຈາລະນາບໍ່ໃຫ້ມີການປັນຜົນ ຈາກຜົນການດຳເນີນທຸລະກິດປະຈຳປີ 2020;
    ວາລະທີ 5: ພິຈາລະນາ ແລະ ຮັບຮອງ ການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຄື ບໍລິສັດ Price Waterhouse Coopers (Lao) Sole Co., Ltd. ("PwC") ພ້ອມທັງກຳນົດຄ່າຈ້າງ ປະຈຳປີ 2021 ຢູ່ລະຫວ່າງ 34,000 - 37,000 ໂດລາສະຫາລັດ
    ວາລະທີ 6: ພິຈາລະນາ ແລະ ຮັບຮອງເອົາ ການລາອອກຈາກຕຳແໜ່ງ ປະທານສະພາບໍລິຫານ ປທລ ຂອງ ທ່ານ ຈັນທອນ ສິດທິໄຊ
    ວາລະທີ 7: ພິຈາລະນາ ແລະ ຮັບຮອງເອົາ ທ່ານ ຫວ່າງ ຣັຕະນະວົງ ມາເປັນ ປະທານສະພາບໍລິຫານ ຂອງ ປທລ;

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ.

ດ້ວຍຄວາມເຄົາລົບ ແລະ ນັບຖືເປັນຢ່າງສູງ

ປະທານສະພາບໍລິຫານ

ບໍລິສັດ ປິໂຕຣລ້ຳມເທຣດດິ້ງ ລາວ ມະຫາຊົນ Petroleum Trading Lao Public Company

ຈັນທອນ ສິດທິໄຊ